ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມ ຄຄຊ ຄັ້ງທີ III



ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ III ປະຈຳປີ 2020 ໄດ້ສຳເລັດລົງໃນວັນທີ 4 ພະຈິກ 2020 ທີ່ສຳນັກງານ ຄຄຊ ພາຍໃຕ້ການເປັນປະທານຂອງທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຄຊ; ພ້ອມນີ້, ກໍ່ມີທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ມີຮອງປະທານ ຄຄຊ-ຜູ້ປະຈຳການ ແລະ ມີບັນດາຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມຄັ້ງນີ້ ເປີດຂຶ້ນໃນທ່າມກາງທີ່ກຳລັງດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII. ພ້ອມນີ້, ຂະແໜງການເງິນພວມສຸມໃສ່ທົບທວນຄືນແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ຂອງ ສປປ ລາວ ໃນໄລຍະປີ 2016-2025 ແລະ ວິໄສທັດຮອດປີ 2030 ໂດຍສະເພາະ ແຜນຍຸດທະສາດໃນການພັດທະນາຕະຫຼາດທຶນ (2016-2025) ທີ່ປະຊຸມຍັງໄດ້ຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວຄັ້ງທີ IV ແລະ ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020). ໃນຂະນະດຽວກັນ, ກໍ່ຢູ່ໃນໄລຍະທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການແຜ່ລະບາດຂອງເຊື້ອພະຍາດ ແລະ ໄພທຳມະຊາດ ຊຶ່ງໄດ້ສົ່ງຜົນກະທົບບໍ່ໜ້ອຍຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍ່ຄືວຽກງານຕະຫຼາດທຶນຂອງປະເທດເຮົາ.

ກອງປະຊຸມຄັ້ງທີ III ປະຈຳປີ 2020 ຍັງໄດ້ມີການປຶກສາຫາລືບາງໜ້າວຽກທີ່ສຳຄັນ ໃນນີ້ໄດ້ມີການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ II ທີ່ມີຜົນສຳເລັດຫຼາຍດ້ານໂດຍສະເພາະໄດ້ສຳເລັດການເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ສ້າງຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນຢູ່ 4 ແຂວງພາກໃຕ້ ແລະ ສຳເລັດການຄົ້ນຄວ້າອະນຸຍາດໃນການອອກຈຳໜ່າຍຮຸ້ນກູ້ຢູ່ປະເທດໄທຂອງບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ. ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ຕ້ອງໄດ້ສືບຕໍ່ເອົາໃຈໃສ່ຫຼາຍບັນຫາເພື່ອພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີຄວາມຄຶກຄື້ນກວ່າເກົ່າ. ພ້ອມນີ້, ກໍ່ມີລາຍງານການປັບປຸງເຄື່ອງໝາຍ (Logo) ຂອງ ຄຄຊ; ນຳສະເໜີນິຕິກຳຈຳນວນ 2 ສະບັບ ແລະ ລາຍງານສະພາບການເຄື່ອນໄຫວຂອງຕະຫຼາດຫຼັກຊັບໃນ 9 ເດືອນໃນປີ 2020, ແຜນການ 3 ເດືອນທ້າຍປີ 2020.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປຢ່າງມີຜົນສຳເລັດອັນຈົບງາມ ໂດຍບັນດາຜູ້ທີ່ເຂົ້າຮ່ວມໄດ້ເຊີດຊູຄວາມຮັບຜິດຊອບສູງ ແລະ ສຸມທຸກສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຢ່າງລະອຽດ, ພາວະວິໄສ, ກົງໄປກົງມາ ແລະໃຫ້ແທດເໝາະກັບສະພາບຄວາມເປັນຈິງ ເພື່ອໃຫ້ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງແທດເໝາະ ແລະ ມີປະສິດທິພາບສູງ ບົນພື້ນຖານເພື່ອຜົນປະໂຫຍດລວມຂອງຊາດ.

ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໄດ້ຕີລາຄາສູງຕໍ່ຜົນການຈັດຕັ້ງປະຕິບັດວຽກງານໃນຄັ້ງຜ່ານມາ. ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ໜັກແໜ້ນເຂັ້ມແຂງກວ່າເກົ່າ, ໃນຕໍ່ໜ້າຈົ່ງຮີບຮ້ອນປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆເພື່ອຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ເປັນໜ້າວຽກລະອຽດ ແລະ ຈັດຕັ້ງເຊື່ອມຊຶມໃຫ້ເປັນເອກະພາບກັນ. ພ້ອມທັງ, ຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈທີ່ກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາໃຫ້ເປັນຮູບປະທຳ, ດ້ວຍຄວາມເປັນເຈົ້າການ ແລະ ດ້ວຍຄວາມຮັບຜິດຊອບສູງ. ໃນການຈັດຕັ້ງປະຕິບັດກໍ່ໃຫ້ມີການຕິດຕາມກວດກາ ແລະ ສະຫຼຸບຖອດຖອນບົດຮຽນແຕ່ລະໄລຍະຢ່າງເໝາະສົມ ເພື່ອໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນສູງ. ຈາກນັ້ນ ໃຫ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດດັ່ງກ່າວ ເພື່ອລາຍງານຕໍ່ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງຕໍ່ໄປ.

# ຂ່າວ-ພາບ: ຣັດສະໝີ ດວງສັດຈະ

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**